ລັດຮາວາຍ
ອົງການຄຸ້ມຄອງທີ່ພັກອາໄສສາທາລະນະແຫ່ງລັດຮາວາຍ

# ການເປີດຮັບບັນຊີລາຍຊື່ຜູ້ລໍຖ້າທີ່ພັກ ອາໄສສາທາລະນະຂອງລັດຖະບານກາງ ບັນຊີລາຍຊື່ຜູ້ລໍຖ້າຂອງ OAHU

ແຈ້ງການແມ່ນໄດ້ກຳນົດວ່າ ອົງການຄຸ້ມຄອງທີ່ພັກອາໄສສາທາລະນະແຫ່ງລັດຮາວາຍ (Hawaii Public Housing Authority, HPHA) ຈະເປີດຮັບບັນຊີລາຍຊື່ຜູ້ລໍຖ້າ ສຳລັບຜູ້ຮ້ອງຂໍທີ່ມີລາຍໄດ້ຕໍ່າ ໂດຍມີສິດທິພິເສດໃນໂຄງການທີ່ພັກອາໄສສາທາລະນະຂອງລັດຖະບານກາງຢູ່ Oahu ຕາມລະບຽບການຂອງກົມພັດທະນາເຄຫາ ແລະ ຕົວເມືອງຂອງສະຫະລັດ (U.S. Department of Housing and Urban Development, HUD), ກົດລະບຽບວ່າດ້ວຍການປົກຄອງຮາວາຍ (Hawaii Administrative Rules) ໝວດ 17-2028 ແລະ ນະໂຍບາຍວ່າດ້ວຍການຮັບເຂົ້າພັກອາໄສ ແລະ ການສືບຕໍ່ພັກອາໄສສາທາລະນະຂອງລັດຖະບານກາງ (Federal Public Housing Admissions and Continued Occupancy Policy, ACOP) ຂອງ HPHA.
ບັນຊີລາຍຊື່ຜູ້ລໍຖ້າຕາມພູມສາດຂອງແຕ່ລະບ່ອນ ທີ່ມີລາຍລະອຽດລຸ່ມນີ້ ຈະເປີດໃຫ້ເປັນເວລາ 5 ວັນ.

**ຈະມີການຮັບເອົາຄຳຮ້ອງທາງອອນລາຍຈາກຜູ້ຮ້ອງຂໍທີ່ມີເງື່ອນໄຂ ທີ່ມີສິດໄດ້ຮັບພ້ອມດ້ວຍເງື່ອນໄຂຄືດັ່ງຕໍ່ໄປນີ້: (1) ການຖືກຍົກຍ້າຍຖິ່ນຖານໂດຍບໍ່ໄດ້ສະມັກໃຈ** ເນື່ອງຈາກໄພພິບັດ, ການດຳເນີນການຂອງລັດຖະບານ ຫຼື ການກະທຳຂອງເຈົ້າຂອງເຮືອນ ດ້ວຍເຫດຜົນທີ່ຢູ່ນອກເໜືອການຄວບຄຸມຂອງຜູ້ຮ້ອງຂໍ ແລະ ເຖິງວ່າຜູ້ຮ້ອງຂໍຈະມີເງື່ອນໄຂການພັກອາໄສກໍຕາມ (ຍົກເວັ້ນການເພີ່ມຄ່າເຊົ່າ); **(2) ຜູ້ເຄາະຮ້າຍຈາກຄວາມຮຸນແຮງພາຍໃນຄອບຄົວ** ທີ່ເຂົ້າຮ່ວມໃນໂຄງການ ໂດຍທີ່ມີການຈັດການກຳລະນີຄວາມຜ່ານໜ່ວຍງານຈັດການຄວາມຮຸນແຮງພາຍໃນຄອບຄົວ, ໂຄງການ ຫຼື ໜ່ວຍງານກາງ; **ຫຼື (3) ບຸກຄົນທີ່ບໍ່ມີເຮືອນ** ທີ່ເຂົ້າຮ່ວມໃນແຜນງານທີ່ພັກ ຫຼື ໂຄງການສຳລັບຜູ້ທີ່ບໍ່ມີເຮືອນ ເຊິ່ງໄດ້ຮັບທຶນຈາກລັດຖະບານກາງ ຫຼື ລັດ ແລະ ມີຄວາມສອດຄ່ອງກັບແຜນການບໍລິການສັງຄົມ.

HPHA ໄດ້ນຳໃຊ້ນະໂຍບາຍການເລືອກແບບຈັບສະຫຼາກ/ສຸ່ມເລືອກ. ພາຍຫຼັງການປິດບັນຊີລາຍຊື່ຜູ້ລໍຖ້າຕາມພູມສາດແຕ່ລະບ່ອນ, HPHA ຈະໃຊ້ການຈັບສະຫຼາກ ເພື່ອສຸ່ມເລືອກຜູ້ຮ້ອງຂໍຈຳນວນໜຶ່ງ ເພື່ອທີ່ຈະບັນຈຸເຂົ້າໃນບັນຊີລາຍຊື່ຜູ້ລໍຖ້າ. ການຈັດລຽງລຳດັບຂອງຜູ້ຮ້ອງຂໍໝົດທຸກຄົນ ທີ່ໄດ້ຮັບການຄັດເລືອກຢູ່ໃນບັນຊີລາຍຊື່ຜູ້ລໍຖ້າ ແມ່ນຈະໃຊ້ການຄັດເລືອກແບບສຸ່ມເລືອກ.

ບັນດາຜູ້ຮ້ອງຂໍຈະມີສິດລໍຖ້າເປັນເວລາ 18 ເດືອນນັບແຕ່ວັນທີທີ່ຖືກບັນຈຸເຂົ້າຢູ່ໃນບັນຊີລາຍຊື່ຜູ້ລໍຖ້າ ແລະ ຫຼັງຈາກນັ້ນມັນກໍຈະໝົດອາຍຸລົງ.

ສຳລັບບັນຊີລາຍຊື່ຜູ້ລໍຖ້າຂອງຂອງ **Leeward, Oahu** *(*Hale Laulima, Kau'iokalani, Maili I ແລະ II, Nanakuli Homes, Waimaha-Sunflower ແລະ Waipahu I ແລະ II):

> ບັນຊີລາຍຊື່ຜູ້ລໍຖ້າ ແມ່ນເປີດເປັນເວລາ 5 ວັນແຕ່ 8:00 ໂມງເຊົ້າ ໃນວັນພະຫັດ, ວັນທີ 2 ມີນາ 2023 ຮອດ 4:00 ໂມງແລງ ໃນວັນຈັນ, ວັນທີ 6 ມີນາ 2023
>
> ການຮັບຄຳຮ້ອງທາງອອນລາຍຈາກຜູ້ຮ້ອງຂໍທີ່ມີສິດສຳລັບຂະໜາດຫ້ອງນອນ: 1-ຫ້ອງນອນ. HPHA ຈະໃຊ້ການຈັບສະຫຼາກ ເພື່ອສຸ່ມເລືອກຜູ້ຮ້ອງຂໍ 500 ຄົນ ເພື່ອທີ່ຈະບັນຈຸເຂົ້າໃນບັນຊີລາຍຊື່ນີ້.

ສຳລັບບັນຊີລາຍຊື່ລໍຖ້າຂອງ **Honolulu, Oahu** (Ka'ahumanu Homes, Kalakaua Homes, Kalihi Valley Homes, Kamehameha Homes, Kuhio Homes, Mayor Wright Homes, Palolo Valley Homes, Pu'uwai Momi, Salt Lake Apartments ແລະ Spencer House)*:*

> ບັນຊີລາຍຊື່ຜູ້ລໍຖ້າ ແມ່ນເປີດເປັນເວລາ 5 ວັນແຕ່ 8:00 ໂມງເຊົ້າ ໃນວັນພະຫັດ, ວັນທີ 9 ມີນາ 2023 ຮອດ 4:00 ໂມງແລງ ໃນວັນຈັນ, ວັນທີ 13 ມີນາ 2023
>
> ການຮັບຄຳຮ້ອງທາງອອນລາຍຈາກຜູ້ຮ້ອງຂໍທີ່ມີສິດສຳລັບຂະໜາດຫ້ອງນອນ: 1-ຫ້ອງນອນ, 2-ຫ້ອງນອນ ຫຼື 3-ຫ້ອງນອນ.  HPHA ຈະໃຊ້ການຈັບສະຫຼາກ ເພື່ອສຸ່ມເລືອກຜູ້ຮ້ອງຂໍ 2, 000

ຄົນໃນບັນຊີລາຍຊື່ນີ້.

ສໍາລັບບັນຊີລາຍຊື່ຜູ້ລໍຖ້າຂອງ **Honolulu, Oahu** (Punchbowl Homes, Kalanihuia, Makamae, Makua Ali'i, Paoakalani ແລະ Pumehana):

ບັນຊີລາຍຊື່ຜູ້ລໍຖ້າ ແມ່ນເປີດເປັນເວລາ 5 ວັນແຕ່ 8:00 ໂມງເຊົ້າ ໃນວັນພະຫັດ, ວັນທີ 16 ມີນາ 2023 ຮອດ 4:00 ໂມງແລງ ໃນວັນຈັນ, ວັນທີ 20 ມີນາ 2023

ການຮັບຄໍາຮ້ອງທາງອອນລາຍສໍາລັບຜູ້ຮ້ອງຂໍທີ່ມີສິດ ທີ່ມາອາຍຸຢ່າງໜ້ອຍ 62 ປີ ຫຼື ບຸກຄົນທີ່ມີຄວາມພິການ ແລະ ທີ່ມີເງື່ອນໄຂໄດ້ຮັບຂະໜາດຫ້ອງນອນຕໍ່ໄປນີ້: ຫ້ອງສະຕູດິໂອ (1 ຄົນ) ຫຼື 2-ຫ້ອງນອນ. HPHA ຈະໃຊ້ການຈັບສະຫຼາກ ເພື່ອສຸ່ມເລືອກຜູ້ຮ້ອງຂໍ 700 ຄົນ ເພື່ອທີ່ຈະບັນຈຸເຂົ້າໃນບັນຊີລາຍຊື່ນີ້.

ສໍາລັບບັນຊີລາຍຊື່ຜູ້ລໍຖ້າຂອງ **Central, Oahu** (Kauhale Nani, Wahiawa Terrace ແລະ Kupuna Home O'Waialua):

ບັນຊີລາຍຊື່ຜູ້ລໍຖ້າ ແມ່ນເປີດເປັນເວລາ 5 ວັນແຕ່ 8:00 ໂມງເຊົ້າ ໃນວັນພະຫັດ, ວັນທີ 23 ມີນາ 2023 ຮອດ 4:00 ໂມງແລງ ໃນວັນຈັນ, ວັນທີ 27 ມີນາ 2023

ການຮັບຄໍາຮ້ອງທາງອອນລາຍສໍາລັບຜູ້ຮ້ອງຂໍທີ່ມີສິດ ທີ່ມາອາຍຸຢ່າງໜ້ອຍ 62 ປີ ຫຼື ບຸກຄົນທີ່ມີຄວາມພິການ ແລະ ທີ່ມີເງື່ອນໄຂໄດ້ຮັບຂະໜາດຫ້ອງນອນຕໍ່ໄປນີ້: ຫ້ອງສະຕູດິໂອ (1 ຄົນ) ຫຼື 1-ຫ້ອງນອນ. HPHA ຈະໃຊ້ການຈັບສະຫຼາກ ເພື່ອສຸ່ມເລືອກຜູ້ຮ້ອງຂໍ 500 ຄົນ ເພື່ອທີ່ຈະບັນຈຸເຂົ້າໃນບັນຊີລາຍຊື່ນີ້.

ສໍາລັບບັນຊີລາຍຊື່ຜູ້ລໍຖ້າຂອງ **Windward, Oahu** *(Ko'olau Village, Ho'okipa Kahalu'u, Kaneohe Apartments, Kauhale O'hana, Waimanalo Homes)*:

ບັນຊີລາຍຊື່ຜູ້ລໍຖ້າ ແມ່ນເປີດເປັນເວລາ 5 ວັນແຕ່ 8:00 ໂມງເຊົ້າ ໃນວັນພະຫັດ, ວັນທີ 30 ມີນາ 2023 ຮອດ 4:00 ໂມງແລງ ໃນວັນຈັນ, ວັນທີ 3 ເມສາ 2023

ການຮັບຄໍາຮ້ອງທາງອອນລາຍຈາກຜູ້ຮ້ອງຂໍທີ່ມີສິດ ທີ່ມີເງື່ອນໄຂຮັບຂະໜາດຫ້ອງນອນຕໍ່ໄປນີ້: 2-ຫ້ອງນອນ ຫຼື 3-ຫ້ອງນອນ. HPHA ຈະໃຊ້ການຈັບສະຫຼາກ ເພື່ອສຸ່ມເລືອກຜູ້ຮ້ອງຂໍ 500 ຄົນ ເພື່ອທີ່ຈະບັນຈຸເຂົ້າໃນບັນຊີລາຍຊື່ນີ້.

**ຂ້ອຍຈະສົ່ງໃບຄໍາຮ້ອງໄດ້ແນວໃດ?** ທ່ານສາມາດສົ່ງຄໍາຮ້ອງທາງອອນລາຍເທົ່ານັ້ນ. ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອໃນຂັ້ນຕອນການສະໝັກ, ກະລຸນາໂທຫາ (808) 832-6046. ອຸປະກອນຕ່າງໆ ເຊັ່ນ: ໂທລະສັບມືຖື ແລະ ແທັບເລັດ ທີ່ມີການເຊື່ອມຕໍ່ອິນເຕີເນັດແມ່ນສາມາດໃຊ້ໄດ້, ແຕ່ເຖິງຢ່າງໃດກໍຕາມ, ບໍ່ແມ່ນທຸກລະບົບປະຕິບັດການຈະຮອງຮັບຄໍາຮ້ອງນີ້. ຫ້ອງການຂອງ HPHA ຈະບໍ່ຮັບຄໍາຮ້ອງໃດໆທັງສິ້ນ.

1. ມີຄວາມພ້ອມໂດຍການກຽມຊື່, ວັນເດືອນປີເກີດ ແລະ ໝາຍເລກປະກັນສັງຄົມ ສໍາລັບທຸກຄົນທີ່ຈະຖືກລະບຸລາຍຊື່ໄວ້ໃນຄໍາຮ້ອງຂອງທ່ານ. ທ່ານຈະຕ້ອງຮູ້ລາຍໄດ້ລວມປະຈໍາເດືອນ (ກ່ອນຫັກອາກອນ) ສໍາລັບແຕ່ລະແຫຼ່ງລາຍຮັບຂອງໝົດທຸກຄົນທີ່ລະບຸລາຍຊື່ໄວ້ໃນຄໍາຮ້ອງຂອງທ່ານ. ທ່ານຕ້ອງລະບຸແຫຼ່ງລາຍຮັບທັງໝົດເປັນລາຍບຸກຄົນ.

2. ຕື່ມຂໍ້ມູນໃສ່ຄໍາຮ້ອງທາງອອນລາຍທີ່ www.hpha.hawaii.gov ຫຼື www.hphaishereforyou.org ໂດຍການກົດໃສ່ "ຍື່ນຄໍາຮ້ອງທາງອອນລາຍຢູ່ບ່ອນນີ້ (Apply Online Here)".

3. ຄໍາຮ້ອງທີ່ສົ່ງກ່ອນ ຫຼື ຫຼັງໄລຍະເວລາເປີດຮັບບັນຊີລາຍຊື່ຜູ້ລໍຖ້າ ຈະຖືກປະຕິເສດໂດຍອັດຕະໂນມັດ ແລະ ຈະບໍ່ມີການຮັບເອົາໂດຍ HPHA. ຄໍາຮ້ອງທີ່ບໍ່ໄດ້ຕື່ມຂໍ້ມູນໃສ່ຢ່າງຄົບຖ້ວນ (ເຊັ່ນ: ຢູ່ລະຫວ່າງການສົ່ງ) ກ່ອນທີ່ຈະປິດຮັບ ແມ່ນຈະຖືກປະຕິເສດ.

4. ພິມໃບຮັບເອກະສານຂອງທ່ານອອກມາ, ຖ່າຍຮູບ ຫຼື ບັນທຶກໝາຍເລກຢືນຢັນຄໍາຮ້ອງຂອງທ່ານໄວ້. ຈະມີການອອກໃບຮັບເອກະສານເພື່ອເປັນການຢືນຢັນໂດຍທັນທີຫຼັງຈາກໄດ້ສົ່ງຄໍາຮ້ອງ. ພິມ ແລະ ບັນທຶກການຢືນຢັນນີ້ໄວ້.

**ຜູ້ຮ້ອງຂໍສາມາດສະໝັກເຂົ້າບັນຊີລາຍຊື່ຜູ້ລໍຖ້າຕາມພູມສາດໜຶ່ງບັນຊີເທົ່ານັ້ນ.**

**ຄໍາຮ້ອງທີ່ຊໍ້າກັນຈະບໍ່ຖືກຍອມຮັບ.** ຄໍາຮ້ອງທີ່ຊໍ້າກັນກັບຂອງສະມາຊິກໃນຄົວເຮືອນດຽວກັນ ຫຼື ຄ້າຍຄືກັນຈະເຮັດໃຫ້ທັງສອງຄໍາຮ້ອງຖືກປະຕິເສດ.
ກ່ອນທີ່ຈະເພີ່ມຄົວເຮືອນໃດໜຶ່ງເຂົ້າໃນບັນຊີລາຍຊື່ຜູ້ລໍຖ້າ, HPHA ຈະດໍາເນີນການກວດລະອຽດ ເພື່ອຖອນຄໍາຮ້ອງທີ່ຊໍ້າກັນອອກ.
ການສົ່ງຄໍາຮ້ອງທີ່ຊໍ້າກັນຈະບໍ່ເພີ່ມໂອກາດຂອງທ່ານໃນການຖືກຄັດເລືອກ ແລະ ສາມາດເຮັດໃຫ້ຜູ້ຮ້ອງຂໍຄົນອື່ນໆໄດ້ຮັບທີ່ຢູ່ອາໄສຊັກຊ້າຢ່າງຫຼວງຫຼາຍ.

**ການຍື່ນຄໍາຮ້ອງໝາຍຄວາມວ່າຂ້ອຍຖືກບັນຈຸຢູ່ໃນບັນຊີລາຍຊື່ຜູ້ລໍຖ້າແລ້ວບໍ? ບໍ່ແມ່ນ, HPHA ຈະໃຊ້ການຈັບສະຫຼາກ ເພື່ອເລືອກຜູ້ຮ້ອງຂໍຈໍານວນໜຶ່ງ ເພື່ອທີ່ຈະບັນຈຸເຂົ້າໃນບັນຊີລາຍຊື່ຜູ້ລໍຖ້າ.**
ພາຍຫຼັງການປິດບັນຊີລາຍຊື່ຜູ້ລໍຖ້າ, HPHA ຈະມອບໝາຍເລກຕໍາແໜ່ງຫຼັງການຈັບສະຫຼາກ ແລະ ຜູ້ຮ້ອງຂໍຈະຖືກບັນຈຸເຂົ້າໃນບັນຊີລາຍຊື່ຜູ້ລໍຖ້າຕາມພູມສາດ ເວັ້ນແຕ່ວ່າຈະຖືກປະຕິເສດ ເນື່ອງຈາກເຫດຜົນທີ່ລະບຸຢູ່ຂ້າງເທິງ. ຜູ້ຮ້ອງຂໍທຸກຄົນຈະໄດ້ຮັບແຈ້ງການຜ່ານທາງອີເມວ ຖ້າພວກເຂົາຖືກຄັດເລືອກດ້ວຍວິທີການຈັບສະຫຼາກ ເພື່ອທີ່ຈະຖືກບັນຈຸເຂົ້າໃນບັນຊີລາຍຊື່ຜູ້ລໍຖ້າ. ກະລຸນາຢ່າຕິດຕໍ່ HPHA ກ່ອນໄດ້ຮັບການຍືນຍັນ ກ່ຽວກັບການບັນຈຸເຂົ້າໃນບັນຊີລາຍຊື່ຜູ້ລໍຖ້າ. ຂໍ້ມູນແມ່ນບໍ່ສາມາດມອບໃຫ້ໄດ້ຜ່ານທາງໂທລະສັບ ກ່ຽວກັບການບັນຈຸເຂົ້າໃນບັນຊີລາຍຊື່ຜູ້ລໍຖ້າ.

ບໍ່ມີ**ຄ່າທໍານຽມ ຫຼື ຄ່າບໍລິການສໍາລັບການຮ້ອງຂໍທີ່ພັກອາໄສກັບ HPHA**.
ພວກເຮົາຂໍຊຸກຍູ້ໃຫ້ບັນດາຜູ້ຮ້ອງຂໍລາຍງານບຸກຄົນ ຫຼື ອົງການຈັດຕັ້ງ ທີ່ພະຍາຍາມຮຽກເກັບຄ່າທໍານຽມ ສໍາລັບການດໍາເນີນຂະບວນການຮັບສະໝັກຄໍາຮ້ອງຂໍຂອງ HPHA ໃນທັນທີ.
ບັນດາຜູ້ຮ້ອງຂໍບໍ່ຄວນຕອບຮັບຄໍາຂໍຄ່າທໍານຽມ ໃນການຍື່ນຄໍາຮ້ອງທີ່ເປັນການສໍ້ໂກງໃດໆ.

ອົງການຈັດຕັ້ງທີ່ອາດຈະສາມາດຊ່ວຍໃນຂະບວນການຄໍາຮ້ອງສະໝັກແມ່ນ:
We Are Oceania
720 North King Street, Honolulu, HI 96817
(808) 913-1364
contact@weareoceania.org

Catholic Charities
1822 Keeaumoku St, Honolulu, HI 96822
(808) 524-4673
info@catholiccharitieshawaii.org

'Ohana Health, Community Care Services (CCS)
1-866-401-7540
(TTY 711)
24 hours a day, 7 days a week

Partners in Care Oahu
200 N Vineyard Blvd Suite A-210, Honolulu, HI 96817
elliotw@partnersincareoahu.org

Parents and Children Together (PACT)
1485 Linapuni St., Honolulu, HI 96819
(808) 847-3285
admin@pacthawaii.org

Helping Hands Hawaii
2100 N Nimitz Hwy, Honolulu, HI 96819
(808) 536-7234
hhh@helpinghandshawaii.org

Honolulu Community Action Program (HCAP)
1132 Bishop St. Suite 100, Honolulu, HI 96813 ·
(808) 521-4531
hcap@hcapweb.org

Aloha United Way
200 N Vineyard Blvd, Ste 700Honolulu, HI 96817
(808) 536-1951
Info211@auw.org
Info@auw.org

ຜູ້ສະໝັກທີ່ຕ້ອງການທີ່ພັກອາໄສທີ່ສົມເຫດສົມຜົນສາມາດໂທຫາ (808) 832-6046 ຫຼື TTY/TDD: (808) 743 4594 ເພື່ອຂໍຄວາມຊ່ວຍເຫຼືອເລື່ອງທີ່ພັກທີ່ສົມເຫດສົມຜົນ ຫຼືອີເມລ໌ hpha@hawaii.gov.

ຕ້ອງການນາຍພາສາບໍ? ກະລຸນາໂທຫາ (808) 832-6046. ນາຍພາສາຍັງຈະສາມາດໃຊ້ໄດ້ຜ່ານ Zoom ໃນວັນທີ ແລະເວລາຕໍ່ໄປນີ້ຢູ່ລິ້ງ Zoom ນີ້:

https://zoom.us/j/7870674228?pwd=cDRMNlArL3lpa2lHUEw0ZXp4MlQvUT09
ID ປະຊຸມ: 787 067 4228
ລະຫັດຜ່ານ: pJzy2h

| | | | |
|---|---|---|---|
| ວັນພະຫັດ | 03/02<br>03/09<br>03/16<br>03/23<br>03/30 | 9:00 ໂມງເຊົ້າ – 10:00 ໂມງເຊົ້າ<br>10:00 ໂມງເຊົ້າ – 11:00 ໂມງແລງ<br>11:00 ໂມງເຊົ້າ – 12:00 ໂມງແລງ | ພາສາມາແຊວ<br>ພາສາຈີນກວາງຕຸ້ງ/ພາສາຈີນກາງ<br>ພາສາຫວຽດນາມ |
| ວັນສຸກ | 03/03<br>03/10<br>03/17<br>03/24<br>03/31 | 9:00 ໂມງເຊົ້າ – 10:00 ໂມງເຊົ້າ<br>10:00 ໂມງເຊົ້າ – 11:00 ໂມງແລງ | ພາສາເກົາຫຼີ<br>ພາສາຊູກ |

ເຂົ້າເບິ່ງເວັບໄຊຂອງພວກເຮົາທີ່ www.hpha.hawaii.gov
ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບໂຄງການຂອງພວກເຮົາ. ສໍາລັບຄໍາຖາມທົ່ວໄປກ່ຽວກັບບັນຊີລາຍຊື່ຜູ້ລໍຖ້າ, ກະລຸນາໂທຫາເບີ (808) 832-6046.